**ຫົວຂໍ້: ການເພີ່ມຂຶ້ນຢ່າງໄວວາຂອງໄພຂົ່ມຂູ່ ຕໍ່ສະມາຊິກສະພາ ໃນອາຊີຕາເວັນອອກສ່ຽງໃຕ້ໃນປີຜ່ານມາ, ໃນບົດລາຍງານໄດ້ຄົ້ນພົບວ່າ:**

ບົດລາຍງານສະບັບໃຫມ່ ໂດຍ ອົງການສະມາຊິກສະພາເພື່ອສິດທິມະນຸດອາຊຽນ (APHR) ໄດ້ພົບວ່າ:
ຜູ້ອອກກົດໝາຍໃນທົ່ວອາຊີອາຕາເວັນອອກສ່ຽງໃຕ້ໄດ້ຕົກຢູ່ພາຍໃຕ້ການຂົ່ມຂູ່ຢ່າງຮຸນແຮງ ແລະ ການລ່ວງລະເມີດທີ່ເພີ່ມຂຶ້ນໃນປີທີ່ຜ່ານມາ, ໃນນີ້ບາງສ່ວນແມ່ນຍ້ອນການເຮັດລັດຖະປະຫານຂອງກອງທັບໃນມຽນມາ, ແຕ່ຍັງມີການເພີ່ມຂຶ້ນທີ່ໜ້າໜັກໃຈໃນສະຖານທີ່ອື່ນໃນຂົງເຂດນີ້.

ອົງການສະມາຊິກສະພາເພື່ອສິດທິມະນຸດອາຊຽນ ໄດ້ກ່າວວ່າ: ຈຳນວນຕົວເລກສະມາຊິກສະພາທີ່ຖືກກັກຕົວໃນອາຊີຕາເວັນອອກສ່ຽງໃຕ້ໄດ້ເພີ່ມຂຶ້ນຢ່າງໄວວາໃນປີນີ້, ເລີ່ມຈາກ 01 ຄົນໃນ ປີ 2020 ເປັນ 91 ຄົນ ໃນປີ 2021, ອົງການສະມາຊິກສະພາເພື່ອສິດທິມະນຸດອາຊຽນ ໄດ້ຄົ້ນພົບໃນບົດລາຍງານສະບັບໃຫມ່ ໃນຫົວຂໍ້: ສະມາຊິກສະພາຢູ່ໃນຄວາມສ່ຽງ: ການໂຈມຕີຕໍ່ຕ້ານສະມາຊິກສະພາຝ່າຍກົງກັນຂ້າມ ໃນອາຊີຕາເວັນອອກສ່ຽງໃຕ້ ໃນປີ 2021. ການເພີ່ມຂຶ້ນຂອງການຂົ່ມຂູ່ຢ່າງໄວວານີ້ໄດ້ຂະຫຍາຍກວ້າງອອກ ເນື່ອງຈາກມີການເພີ່ມຂຶ້ນໃນມຽນມາ ເຊິ່ງເປັນບ່ອນທີ່ທະຫານໄດ້ຄຸມອຳນາດໃນລັດຖະປະຫານໃນເດືອນກຸມພາທີ່ຜ່ານມາ, ເຖິງແນວໃດກໍ່ຕາມ ກໍ່ຍັງມີການເພີ່ມຂຶ້ນຂອງໄພຂົ່ມຂູ່ໃນສະຖານທີ່ອື່ນໃນຂົງເຂດນີ້ ລວມມີ ໄທ, ຟີລິບປິນ ແລະ ມາເລເຊຍ. ເຖິງວ່າຈະບໍ່ຖືກກ່າວເປັນລາຍລະອຽດໃນບົດລາຍງານ ອາດີດຜູ້ອອກກົດໝາຍທີ່ເປັນຝ່າຍຄ້ານໃນກຳປູເຈຍໄດ້ຖືກຕົກເປັນເປົ້າໝາຍໂຈມຕີ.

ທ່ານ ເທດດີ້ ແບັດກວິແລັດ ຈຣ, ສະມາຊິກສະພາບໍລິຫານ ອົງການສະມາຊິກສະພາເພື່ອສິດທິມະນຸດອາຊຽນ ແລະ ອາດີດສະມາຊິກສະພາຟີລິບປິນ ໄດ້ກ່າວວ່າ "ປີນີ້ ກໍ່ເປັນອີກປີທີ່ມືດມົນສຳລັບສິດທິມະນຸດໃນອາຊີຕາເວັ້ນອອກສ່ຽງໃຕ້ ເນື່ອງຈາກຂົງເຂດຂອງພວກເຮົາໄດ້ລົງເລິກສູ່ການປົກຄອງຂອງຜູ້ຜະເດັດການ, ຜູ້ສ້າງກົດໝາຍທີ່ຖືກເລືອກຕັ້ງໄດ້ຕົກເປັນເປົ້າໝາຍ ໂດຍສະເພາະແມ່ນຜູ້ທີ່ຢືນໝັ້ນໃນຄວາມເປັນທຳເປັນພື້ນຖານ, ສິດທິມະນຸດ ແລະ ປະຊາທິປະໄຕ". "ການເພີ່ມຂຶ້ນຂອງໄພຂົ່ມຂູ່ໃນມຽນມາໄດ້ກາຍເປັນສິ່ງຫຍຸ້ງຍາກ, ເຊິ່ງເປັນສະຖານທີ່ທີ່ຝ່າຍກົງກັນຂ້າມທາງການເມືອງໄດ້ຖືກໂຈມຕີໂດຍລັດຖະບານທະຫານ ແຕ່ກໍ່ຍັງມີສະຖານທີ່ອື່ນ ທີ່ລັດຖະບານສວຍໃຊ້ພະຍາດໂຄວິດ-*19* ເພື່ອເຮັດໃຫ້ສະມາຊິກສະພາທີ່ເປັນຝ່າຍກົງກັນຂ້າມອ່ອນແອລົງ ແລະ ທຳລາຍບົດບາດຄວາມຮັບຜິດຊອບທີ່ສຳຄັນທີ່ພວກເຂົາມີໃນທາງດ້ານປະຊາທິປະໄຕ.

ທ່ານ ແບກວີແລັດ ໄດ້ກ່າວຕື່ມວ່າ “ ສະມາຊິກສະພາໄດ້ຖືກກັກຂັງ ພຽງແຕ່ເພື່ອຕື່ມເຕັມການເປັນພັກກຳອຳນາດທີ່ເປັນຕົວແທນຂອງປະຊາຊົນ. ພວກເຮົາຍັງໄດ້ເຫັນວ່າ ການຂົ່ມຂູ່ທີ່ມີຕໍ່ຜູ້ອອກກົດໝາຍໃນການປະຕິບັດໜ້າທີ່ວຽກງານຂອງພວກເຂົາ, ເຊັ່ນດຽວກັນກັບ ແນວຄວາມຄິດປິດລັບ ຂອງການລ່ວງລະເມີດທາງກົດໝາຍ ແລະ ການບິດເບືອນຂໍ້ມູນ ເພື່ອເລັ່ງໃສ່ ການລຸດຄວາມໜ້າເຊື່ອຖື ແລະ ເຮັດໃຫ້ພວກເຂົາບໍ່ມີປາກມີສຽງ”.

ທ່ານກາງການຫລົ້ມເຫລວຂອງສິດທິມະນຸດໃນມຽນມາ, ຝ່າຍກົງກັນຂ້າມທາງການເມືອງ, ໂດຍສະເພາະແມ່ນ ສະມາຊິກໃນພັກສັນນິບາດຊາດເພື່ອປະຊາທິປະໄຕ (*NLD)* ເຊິ່ງໄດ້ຮັບໄຊຊະນະຢ່າງຖ້ວມລົ້ນໃນປີ 2020 ໄດ້ເປັນເປົ້າໝາຍທີ່ພົ້ນເດັ່ນ. ລັດຖະບານທະຫານໄດ້ຢຸດການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາເຂດ ແລະ ໄດ້ຍຶດເອົາບ່ອນນັ່ງໃນສະພາຂອງສະມາຊິກສະພາທີ່ໄດ້ມາຈາກການເລືອກຕັ້ງ ໂດຍປາສະຈາກເຫດຜົນທາງດ້ານກົດໝາຍ ແລະ ລັດຖະທຳມະນູນ. ມີສະມາຊິກສະພາຢ່າງຫນ້ອຍ 90 ຄົນ ຖືກກັກຕົວ ຫຼື ຖືກກັກບໍລິເວນຢູ່ເຮືອນ ຂະນະທີ່ ສະມາຊິກສະພາຄົນອື່ນໆ ກໍໄດ້ລົບລີ້ເພື່ອຫຼີກລ່ຽງຊາຕາກຳອັນດຽວກັນ.

ທ່ານ ຊານ ຊານທີເອໂກ, ປະທານອົງການສະມາຊິກສະພາເພື່ອສິດທິມະນຸດອາຊຽນ ແລະ ສະມາຊິກສະພາມາເລເຊຍ ໄດ້ກ່າວວ່າ: “ບໍ່ພຽງແຕ່ການລັກຂະໂມຍເອົາຜົນການເລືອກຕັ້ງໃນປີ 2020 ຈາກປະຊາຊົນ, ລັດຖະບານທະຫານມຽນມາໄດ້ຊອກຫາວິທີທາງເພື່ອຮັກສາອຳນາດ ໂດນການປິດສະພາ, ປະກາດວ່າ ກຸ່ມທີ່ຖືກເລືອກຕັ້ງຈາກປະຊາທິປະໄຕແມ່ນຜິດກົດໝາຍ ແລະ ໄດ້ຈັບສະມາຊິກສະພາທີ່ຖືກສົງໄສເກືອບ 100 ຄົນເຂົ້າຄຸກ”. “ໃນປີທີ່ຜ່ານມາ, ປະຊາຊົນມຽນມາໄດ້ປະກາດຢ່າງຊັດເຈນວ່າຕົວແທນຂອງເຂົາແມ່ນໃຜ - ແມ່ນຜູ້ທີ່ພວກເຂົາເລືອກຕັ້ງ ໃນການເລືອກຕັ້ງປີ 2020 ແລະ ອົງການຈັດຕັ້ງສາກົນ ລວມທັງ ອາຊຽນ ຕ້ອງວິຈານຢ່າງແຂງຂັນຕໍ່ກັບທະຫານມຽນມາ, ຮຽກຮ້ອງໃຫ້ປ່ອຍຄົນທີ່ຖືກກັກຕົວຕັ້ງແຕ່ການເຮັດລັດຖະປະຫານ ລວມມີ ສະມາຊິກສະພາ ແລະ ທັງນີ້ ເພື່ອນຳປະເທດກັບສູ່ເສັ້ນທາງປະຊາທິປະໄຕອີກເທື່ອໜຶ່ງ.

ອົງການສະມາຊິກສະພາເພື່ອສິດທິມະນຸດອາຊຽນ ໄດ້ກ່າວວ່າ ນອກຈາກສະຖານະການໃນມຽນມາທີ່ຖືກອອກຂ່າວ, ຜູ້ອອກກົດໝາຍຍັງຖືກຈັດຢູ່ໃນຄວາມສ່ຽງໃນສະຖານທີ່ອື່ນ ໃນອາຊີຕາເວັນອອກສ່ຽງໃຕ້ ຢ່າງເຫັນໄດ້ຊັດເຈນ ຢູ່ ມາເລເຊຍ, ຟິລິບປິນ ແລະ ໄທ.

ໃນມາເລເຊຍ, ໃນເດືອນມັງກອນ ລັດຖະບານໃນເວລານັ້ນ ທີ່ເປັນລັດຖະບານຂອງນາຍົກລັດຖະມົນຕີ ມູຍິດດິນ ຍັດຊິນ ໄດ້ສວຍໃຊ້ພະຍາດໂຄວິດ-19 ເປັນຂໍ້ອ້າງໃນການໃຊ້ພາວະສຸກເສີນແຫ່ງຊາດ,

ໃນຂະນະທີ່ສະພາຖືກຢຸດປະຕິບັດວຽກງານເປັນເວລາຫຼາຍກວ່າ 7 ເດືອນ. ນັກການເມືອງຝ່າຍກົງກັນຂ້າມໄດ້ຕົກເປັນເປົ້າໝາຍໃນການລົງໂທດຢ່າງຮຸນແຮງໃນຂໍ້ຂັດແຍ່ງນີ້, ໂດຍມີຜູ້ອອກກົດໝາຍຢ່າງໜ້ອຍ 10 ຄົນ ຖືກສອບສວນ ຫຼື ຖືກໂທດ ເນື່ອງຈາກໄດ້ສະແດງການວິພາກວິຈານທີ່ກ່ຽວຂ້ອງການການລ່ວງລະເມີດສິດທິມະນຸດ ຫຼື ການຢຸດການປະຕິບັດວຽກຂອງສະພາ.

ໃນຟິລິບປິນ, ແນວຄວາມຄິດຂໍ້ມູນບິດເບືອນ, ການຂົ່ມຂູ່ ແລະ ຖືກເອີ້ນວ່າ " ແດງແທັກກິງ" ຂອງຜູ້ອອກກົດໝາຍທີ່ເປັນຝ່າຍກົງກັນຂ້າມ ໄດ້ເພີ່ມຂຶ້ນຢ່າງໜ້າກັງວົນກ່ອນການເລືອກຕັ້ງທົ່ວໄປທີ່ຈະຈັດຂຶ້ນໃນປີ 2022, ຂະນະທີ່ ປະທານນາທິບໍດີ ໂຣດຣິໂກ ດູເຕີເຕ ແລະ ເຈົ້າໜ້າທີ່ອາວຸໂສ ໄດ້ກ່າວຫາຢ່າງບໍ່ມີຄວາມຈິງ ເພື່ອໂຈມຕີຜູ້ອອກກົດໝາຍຝ່າຍປີກຊ້າຍ, ໂດຍອ້າງວ່າ ພວກເຂົາສະໜັບສະໜູນການກໍ່ຈະລາຈົນຄອມມູນິດທີ່ຖືອາວຸດ. ສະມາຊິກສະພາສູງ ທ່ານ ເລລາ ເດີ ລີມາ ຍັງຄົງຖືກຈໍາຄຸກ ແລະ ປັດຈຸບັນຖືກກັກບໍລິເວນຢ່າງບໍ່ມີເຫດຜົນເປັນເວລາໃກ້ຮອດ 5 ປີ.

ນອກຈາກນີ້, ໃນໄທ. ລັດຖະບານ ແລະ ພັນທະມິດໄດ້ສືບຕໍ່ຍົກລະດັບການກ່າວຫາກໍລະນີອາດສະຍາກໍາກັບ ຜູ້ອອກກົດໝາຍຂອງພັກກ້າວໜ້າ (MFP), ໃນຂະນະທີ່ສະມາຊິກສະພາຝ່າຍກົງກັນຂ້າມກໍ່ຖືກເລັ່ງເປົ້າ ໃນການການຂົ່ມເຫງທາງອອນລາຍທີ່ຂະຫຍາຍກວ້າງອອກ, ປົກກະຕິຈະປະຕິບັດການໂດຍຜ່ານການຮ່ວມມືກັນ "ການປະຕິບັດຂໍ້ມູນ" ຄວບຄຸມໂດຍກຸ່ມຄົນທີ່ຖືກແຕ່ງຕັ້ງລະດັບຊາດ.

ທ່ານ ແບກວີແລັດ ຈຣ ໄດ້ກ່າວວ່າ "ການໂຈມຕີສະມາຊິກສະພາ ກໍ່ຄືການໂຈມຕີປະຊາທິປະໄຕ. ລະບົບການລ່ວງລະເມີດຂອງສະມາຊິກສະພາ - ບໍ່ວ່າຈະແມ່ນ ອອນລາຍ, ອອບລາຍ, ການພິຈາລະນາຄະດີ ຫຼື ທາງດ້ານອື່ນ - ເຫັນໄດ້ຊັດເຈນວ່າ ເປັນການເລັ່ງເປົ້າບໍ່ໃຫ້ພວກເຂົາປະຕິບັດວຽກຂອງຕົນເອງ ແລະ ການເຮັດໜ້າທີ່ເປັນຜູ້ກວດສອບ ແລະ ສ້າງຄວາມສົມດຸນໃນຖານະເປັນຕົວແທນຂອງປະຊາຊົນ".

"ບົດບາດຂອງສະມາຊິກສະພາແມ່ນມີຄວາມສໍາຄັນຫຼາຍໃນປະຊາທິປະໄຕ ໂດຍສະເພາະໃນໄລຍະການລະບາດຂອງພະຍາດໂຄວິດໃນສອງປີທີ່ຜ່ານມາ ຫຼື ວິທີການການເລືອກຕັ້ງ ຄືດັ່ງໃນກໍລະນີຂອງຟິລິບປິນ ແລະ ກໍາປູເຈຍ.

ທ່ານ ແບດກວີແລັດ ໄດ້ກ່າວວ່າ: "ໃນທ່າມກາງການທໍາລາຍປະຊາທິປະໄຕທີ່ພວກເຮົາກໍາລັງເຫັນໃນທົ່ວຂົງເຂດນີ້, ຜູ້ທີ່ກໍາລັງເຮັດວຽກເພື່ອປົກປ້ອງປະຊາທິປະໄຕຕ້ອງຮວມຕົວກັນ ແລະ ປະຕິບັດເປັນສຽງໜຶ່ງດຽວ. ພວກເຮົາຮຽກຮ້ອງມາລັດຖະບານໃນທົ່ວອາຊີຕາເວັນອອກສຽງໃຕ້ໃຫ້ເຮັດທຸກຢ່າງໂດຍອໍານາດທີ່ມີ ເພື່ອທີ່ປົກປ້ອງສິດທິມະນຸດຂອງສະມາຊິກສະພາທັງໝົດ ແລະ

ຮຽກຮ້ອງໝູ່ເພື່ອນໃນກຸ່ມສະມາຊິກສະພາ
ຮ້ອງຂໍຄວາມຊ່ວຍເຫຼືອໃນເວລາຖືກຂົ່ມເຫງໄດ້ຕະຫຼອດເວລາ”.